## ຍື່ນຂໍການຊ່ວຍເຫຼືອໄພພິບັດ

**ການຍື່ນທາງອິນເຕີເນັດ ຫຼື ໂທລະສັບສະມາດໂຟນ:** ຜູ້ລອດຊີວິດຈາກໄພພິບັດອາດຍື່ນຫາໂຄງການຊ່ວຍເຫຼືອບຸກຄົນ ຫຼື ຄົວເຮືອນ ຫຼື ກວດເບິ່ງສະຖານະຄຳຮ້ອງຂອງພວກເຂົາໄດ້ທີ່ www.DisasterAssistance.gov ຜູ້ລອດຊີວິດຈາກໄພພິບັດອາດຈະເຂົ້າເຖິງ FEMA ໄດ້ຜ່ານສະມາໂຟນໂດຍການດາວໂຫຼດແອັບພລິເຄຊັນຈາກ www.fema.gov ຫຼື ຮ້ານຄ້າແອັບພລິເຄຊັນຂອງຜູ້ໃຫ້ບໍລິການເຄືອຂ່າຍມືຖືຂອງພວກເຂົາ.

**ໂດຍທາງໂທລະສັບ:** ຜູ້ລອດຊີວິດຈາກໄພພິບັດອາດຈະໂທຫາເບີໂທບໍ່ເສຍຄ່າຂອງ FEMA ໄດ້ທີ່ເບີ 800-621-3362 ເພື່ອລົງທະບຽນຂໍການຊ່ວຍເຫຼືອ ຫຼື ເພື່ອກວດເບິ່ງສະຖານະຄຳຮ້ອງຂອງທ່ານ. ຜູ້ລອດຊີວິດຈາກໄພພິບັດຜູ້ທີ່ຫູໜວກ, ໄດ້ຍິນຍາກ ຫຼື ມີຄວາມບົກຜ່ອງໃນການເວົ້າ ແລະ ຜູ້ທີ່ໃຊ້ໂທລະ ສັບຂໍ້ຄວາມ (TTY) ອາດຈະໂທຫາເບີ 800-462-7585. ຜູ້ລອດຊີວິດຈາກໄພພິບັດຜູ້ທີ່ໃຊ້ 711 ຫຼື ໃຊ້ການໂທດ້ວຍພາບ (VRS) ສາມາດໂທຫາເບີ 800-621-3362.

**ດ້ວຍຕົວເອງ**: ໄປຫາສູນຟື້ນຟູໄພພິບັດ.

- ສຳລັບສະຖານທີ່, ກວດເບິ່ງແອັບມືຖືຂອງ FEMA ທີ່ www.fema.gov/mobile-app ຫຼື ໂທ 1-800-621-3362 ຫຼື ເຂົ້າເວັບໄຊ www.DisasterAssistance.gov.
- ສະມາຊິກໜ່ວຍງານຊ່ວຍເຫຼືອຜູ້ລອດຊີວິດຈາກໄພພິບັດອາດລົງໄປຢ້ຽມຢາມຕາມບ້ານເຮືອນໃນເຂດທີ່ຢູ່ຂອງທ່ານ. ພວກເຂົາຈະມີບັດພະນັກງານ FEMA ທີ່ມີຮູບຕິດໂຕໄປນຳ.

## ຈະເຮັດແນວໃດຖ້າທ່ານບໍ່ເຫັນດີກັບ ໜັງສືຄຳຕັດສິນຂອງ FEMA

FEMA

ທ່ານມີສິດທີ່ຈະອຸທອນຄຳຕັດສິນຂອງ FEMA ລວມທັງຈຳນວນເງິນຂອງທ່ານໄດ້.

### ຂ້ອຍຈຳເປັນຕ້ອງໄດ້ຍື່ນຄຳອຸທອນຂອງຂ້ອຍເມື່ອໃດ?

ທ່ານຕ້ອງຍື່ນຄຳອຸທອນຂອງທ່ານພາຍໃນ **60 ວັນນັບຈາກ** ວັນທີ່ໄດ້ຮັບໜັງສືແຈ້ງການມີສິດໄດ້ຮັບຂອງທ່ານ.




### ທ່ານຕ້ອງປະກອບຫຍັງແດ່?

ຄຳອະທິບາຍເປັນລາຍລັກອັກສອນ ແລະ ມີລາຍເຊັນທີ່ອະທິບາຍວ່າ ເປັນຫຍັງທ່ານຈຶ່ງເຊື່ອວ່າການຕັດສິນຂອງ FEMA ນັ້ນບໍ່ຖືກຕ້ອງ ແລະ ພ້ອມທັງສຳເນົາເອກະສານອື່ນໆທີ່ສະໜັບສະໜູນການອຸທອນຂອງທ່ານ, ລວມທັງຫຼັກຖານຄວາມສາຍຫາຍອັນເກີດຈາກໄພພິບັດຂອງທ່ານ.

ຊື່ ແລະ ນາມສະກຸນຂອງທ່ານ, ເລກທີໃບຄຳຮ້ອງ FEMA ແລະ ເລກທີໄພພິບັດຂອງທ່ານ, ທີ່ຢູ່ຂອງທ່ານກ່ອນເກີດໄພພິບັດ ແລະ ເບີໂທລະສັບ ແລະ ທີ່ຢູ່ປັດຈຸບັນຂອງທ່ານຕ້ອງປະກອບໃສ່ຢູ່ໃນເອກະສານທີ່ຍື່ນທຸກສະບັບ. ເບີຕ່າງໆເຫຼົ່ານີ້ໄດ້ພິມໄວ້ໃນໜ້າທີ 1 ຂອງໜັງສືແຈ້ງຄຳຕັດສິນທີ່ທ່ານໄດ້ຮັບ, ຢູ່ດ້ານເທິງຊື່ ແລະ ທີ່ຢູ່ຂອງທ່ານ.

### ຂ້ອຍຈະສົ່ງຄຳອຸທອນຂອງຂ້ອຍໄປໃສ?

**ສົ່ງໄປທີ່:**
FEMA
P.O.Box 10055
Hyattsville, MD 20782-8055

ຫຼື

**ແຟັກໄປທີ່:**
800-827-8112
Attn: FEMA Appeals Officer

### ມັນຈະໃຊ້ເວລາດົນປານໃດກ່ອນທີ່ຂ້ອຍຈະຮູ້ວ່າຄຳອຸທອນຂອງຂ້ອຍໄດ້ຮັບການອະນຸມັດ ຫຼື ຖືກປະຕິເສດ?

ທ່ານຈະໄດ້ຮັບໜັງສືຄຳຕັດສິນຈາກ FEMA ພາຍໃນ **90** ວັນຫຼັງຈາກ FEMA ໄດ້ຮັບການອຸທອນຂອງທ່ານ. ເພື່ອກວດເບິ່ງສະຖານະຄຳອຸທອນຂອງທ່ານ ຫຼື ເພື່ອແຈ້ງ FEMA ໃຫ້ຮັບຊາບການປ່ຽນແປງທີ່ຢູ່ ຫຼື ຂໍ້ມູນຕິດຕໍ່ຂອງທ່ານ, ກະລຸນາເຂົ້າໄປທີ່ເວັບໄຊ **www.DisasterAssistance.gov** ແລະ ເລືອກເອົາຄຳວ່າ ກວດເບິ່ງສະຖານະໃບຄຳຮ້ອງຂອງທ່ານ ຫຼື ໂທຫາສາຍດ່ວນ FEMA ທີ່ເບີ 800-621-FEMA (3362)

### ຂ້ອຍສາມາດໂທຫາໃຜໄດ້ ຖ້າຂ້ອຍມີຄຳຖາມກ່ຽວກັບຄຳອຸທອນຂອງຂ້ອຍ?

ໂທຫາສາຍດ່ວນ FEMA ທີ່ເບີ 800-621-3362 (ສຽງ/711/VRS). ສຳລັບພາສາສະເປນ, ກົດ 2. TTY: 800-621-3362. ຫຼື ເຂົ້າໄປທີ່ເວັບໄຊ **www.DisasterAssistance.gov**

# ການຊ່ວຍເຫຼືອຫຼັງຈາກໄພພິບັດ

## ສູນຊ່ວຍເຫຼືອບຸກຄົນ FEMA ສາມາດຊ່ວຍທ່ານຟື້ນຟູໄດ້

*FEMA B-545/ເມສາ 2019*

FEMA



Lao

## FEMA ສາມາດຊ່ວຍທ່ານໄດ້ແນວໃດ?

ການຊ່ວຍເຫຼືອຈາກ FEMA ສາມາດຊ່ວຍທ່ານ ແລະ ສະມາຊິກໃນຄົວເຮືອນຂອງທ່ານຜູ້ທີ່ໄດ້ຮັບຜົນກະທົບຈາກໄພພິບັດ, ເບິ່ງແຍງເລື່ອງຄ່າໃຊ້ຈ່າຍໃນສິ່ງທີ່ຈຳເປັນ ແລະ ຄວາມຕ້ອງການອັນຈຳເປັນທີ່ບໍ່ສາມາດມີໄດ້ຜ່ານປະກັນໄພ ຫຼື ການຊ່ວຍເຫຼືອໃນຮູບແບບອື່ນ.

## ການຊ່ວຍເຫຼືອດ້ານທີ່ພັກອາໄສ:

ການຊ່ວຍເຫຼືອດ້ານທີ່ພັກອາໄສອາດຈະໃຫ້ການຊ່ວຍເຫຼືອດ້ານການເງິນ ຫຼື ໂດຍກົງ, ລວມທັງ:

**ການຊ່ວຍຄ່າເຊົ່າທີ່ພັກ:** ການຊ່ວຍເຫຼືອດ້ານການເງິນໃນການເຊົ່າເຮືອນຊົ່ວຄາວໃນຂະນະທີ່ສ້ອມແປງຄວາມເສຍຫາຍຂອງທີ່ຢູ່ອາໄສຕົ້ນຕໍຂອງທ່ານຫຼັງຈາກໄພພິບັດ ຫຼື ໃນຂະນະຍົກຍ້າຍໄປທີ່ຢູ່ອາໄສຖາວອນ.

**ການເບີກຄ່າໃຊ້ຈ່າຍການຂົນຍ້າຍຄືນ:** ການຊ່ວຍເຫຼືອດ້ານການເງິນເບີກຄ່າໃຊ້ຈ່າຍໃນການຂົນຍ້າຍໄລຍະສັ້ນຄືນ.

**ການສ້ອມແປງເຮືອນ:** ການຊ່ວຍເຫຼືອດ້ານການເງິນສຳລັບເຈົ້າຂອງເຮືອນເພື່ອສ້ອມແປງເຮືອນເປ່ເພທີ່ບໍ່ມີປະກັນໄພເນື່ອງຈາກໄພພິບັດ. ການຊ່ວຍເຫຼືອແມ່ນຕັ້ງໃຈໃຫ້ໃນການສ້ອມແປງເຮືອນເພື່ອໃຫ້ໄດ້ສະພາບການເປັນຢູ່ທີ່ປອດໄພ ແລະ ຖືກສຸຂະອະນາໄມ ຫຼື ໃຊ້ໄດ້ເຕັມທີ່.

**ການປ່ຽນເຮືອນ:** ການຊ່ວຍເຫຼືອດ້ານການເງິນສຳລັບເຈົ້າຂອງເຮືອນທີ່ຕ້ອງໄດ້ປ່ຽນແທນ ຫຼື ສ້າງທີ່ຢູ່ອາໄສຕົ້ນຕໍຂອງພວກເຂົາຄືນເນື່ອງຈາກໄພພິບັດ.

**ທີ່ຢູ່ອາໄສໂດຍກົງ:** ຢູ່ໃນສະພາບທີ່ຈຳກັດແຫຼ່ງທີ່ຢູ່ອາໃສຊົ່ວຄາວບໍ່ພຽງພໍຢູ່ພາຍໃນໄລຍະທາງການໄປມາທີ່ສົມເຫດສົມຜົນ, FEMA ອາດສາມາດໃຫ້ທີ່ຢູ່ອາໄສຊົ່ວຄາວໃຫ້ແກ່ຜູ້ເປັນເຈົ້າຂອງບ້ານ ຫຼື ຜູ້ເຊົ່າໂດຍກົງໄດ້.

## ການຊ່ວຍເຫຼືອຕາມຄວາມຈຳເປັນດ້ານອື່ນໆ:

**ຊັບສິນສ່ວນຕົວ:** ການຊ່ວຍເຫຼືອດ້ານການເງິນເພື່ອສ້ອມແປງ ຫຼື ປ່ຽນແທນເຄື່ອງໃຊ້ໃນເຮືອນ, ລວມທັງແຕ່ບໍ່ຈຳກັດແຕ່ເຄື່ອງຕົບແຕ່ງເຮືອນ, ເຄື່ອງໄຟຟ້າ, ເຄື່ອງມືທີ່ຈຳເປັນ ແລະ ອຸປະກອນຊ່ວຍຕ່າງໆທີ່ອຳນວຍຄວາມສະດວກໃນການກຳເນີນກິດຈະກຳການດຳລົງຊີວິດປະຈຳວັນ.

**ທາງການແພດ/ທັນຕະກຳ (ແຂ້ວ):** ການຊ່ວຍເຫຼືອດ້ານການເງິນເພື່ອຈ່າຍຄ່າໃຊ້ຈ່າຍທາງການແພດ ຫຼື ທັນຕະກຳ ຫຼື ການສູນເສຍທີ່ເກີດຈາກໄພພິບັດ. ອັນນີ້ລວມມີບໍ່ຈຳກັດແຕ່ການບໍລິການໃນໂຮງໝໍ ແລະ ລົດສຸກເສີນ, ຢາ ແລະ ການສ້ອມແປງ ຫຼື ການປ່ຽນແທນອຸປະກອນຊ່ວຍທາງການແພດ ຫຼື ເຕັກໂນໂລຢີທີ່ຈຳເປັນ.

**ການຊາປະນາກິດສົບ:** ການຊ່ວຍເຫຼືອດ້ານການເງິນສຳລັບຄ່າໃຊ້ຈ່າຍທີ່ເກີດຂຶ້ນຈາກການເສຍຊີວິດ ຫຼື ພິທີຝັງສົບເຊິ່ງເປັນຜົນກະທົບຈາກໄພພິບັດໂດຍທາງກົງ ຫຼື ທາງອ້ອມ. ຄ່າໃຊ້ຈ່າຍລວມມີແຕ່ບໍ່ ຈຳກັດແຕ່ລາຄາຂອງໂລງສົບ ຫຼື ໂຖໃສ່ກະດູກ ຫຼື ພິທີຊາປະນາກິດສົບ.

**ການລ້ຽງເດັກ:** ການຊ່ວຍເຫຼືອດ້ານການເງິນສຳລັບຄ່າການລ້ຽງເດັກທີ່ມີລາຄາສູງຂຶ້ນເນື່ອງຈາກໄພພິບັດ. ຄ່າໃຊ້ຈ່າຍທີ່ມີສິດໄດ້ຮັບລວມມີຄ່າການລ້ຽງເດັກອາຍຸ 13 ປີລົງມາ ແລະ/ຫຼື ເດັກພິການຕາມກົດໝາຍລັດຖະບານກາງກຳນົດຈົນເຖິງອາຍຸ 21 ປີ, ຜູ້ທີ່ຕ້ອງການຄວາມຊ່ວຍເຫຼືອກັບກິດຈະກຳການກຳລົງຊີວິດປະຈຳວັນ.

**ຄ່າໃຊ້ຈ່າຍອື່ນໆ:** ການຊ່ວຍເຫຼືອດ້ານການເງິນເພື່ອຊື້ສິ່ງຂອງສະເພາະທີ່ບໍ່ມີກ່ອນການເກີດໄພພິບັດ. ພວກມັນອາດຈະລວມມີແຕ່ບໍ່ຈຳກັດແຕ່ສິ່ງຂອງຕ່າງໆເຊັ່ນ: ຈັກດູດຝຸ່ນແບບປຽກ/ແຫ້ງ, ເລື່ອຍໄຟຟ້າ ຫຼື ເຄື່ອງປັ່ນໄຟສຳລັບອຸປະກອນທີ່ຈຳເປັນທາງການແພດ.

**ການເດີນທາງ:** ການຊ່ວຍເຫຼືອດ້ານການເງິນເພື່ອສ້ອມແປງ ຫຼື ປ່ຽນພາຫະນະທີ່ເປ່ເພເນື່ອງຈາກໄພພິບັດ.

**ຄ່າໃຊ້ຈ່າຍໃນການຍົກຍ້າຍ ແລະ ຄ່າສາງເກັບຮັກສາ:** ການຊ່ວຍເຫຼືອດ້ານການເງິນໃນການຍົກຍ້ານ ແລະ ເກັບມ້ຽນຊັບສິນສ່ວນຕົວຊົ່ວຄາວອອກຈາກທີ່ຢູ່ອາໄສຕົ້ນຕໍທີ່ໄດ້ຮັບຄວາມເສຍຫາຍໃນລະຫວ່າງການສ້ອມແປງ. ການຊ່ວຍເຫຼືອອາດລວມມີການຍົກຍ້າຍຂອງໃຊ້ໃນຄົວເຮືອນໄປທີ່ຢູ່ອາໄສຕົ້ນຕໍບ່ອນໃໝ່.

**ການທຳຄວາມສະອາດ ແລະ ການຍົກຍ້າຍ:** ການຊ່ວຍເຫຼືອດ້ານການເງິນສຳລັບການບໍລິການເພື່ອກຳຈັດສານປົນເປື້ອນ ແລະ ຂ້າເຊື້ອພາຍໃນບໍລິເວນເຮືອນທີ່ຖືກນ້ຳຖ້ວມ.

**ການຊ່ວຍເຫຼືອທີ່ຈຳເປັນທີ່ສຸດ:** ການຊ່ວຍເຫຼືອດ້ານການເງິນສຳລັບຜູ້ຍື່ນຄຳຮ້ອງ ຜູ້ທີ່ມີຄວາມຈຳເປັນທັນທີ ແລະ ຮີບດ່ວນເນື່ອງຈາກພວກເຂົາໄດ້ພັດພາກຈາກທີ່ຢູ່ອາໄສຂອງພວກເຂົາ.

## ເງື່ອນໄຂການມີສິດໄດ້ຮັບການຊ່ວຍເຫຼືອທີ່ຢູ່ອາໄສ ແລະ ຄວາມຈຳເປັນອື່ນໆ:

- ການສູນເສຍຂອງທ່ານຈາກໄພພິບັດຕ້ອງນອນຢູ່ໃນເຂດໄພພິບັດປະກາດໂດຍປະທານາທິບໍດີ;
- ສະມາຊິກຄອບຄົວຂອງທ່ານຄົນໜຶ່ງຕ້ອງມີສັນຊາດອາເມລິກາ, ຜູ້ບໍ່ຖືສັນຊາດ ຫຼື ຄົນຕ່າງດ້າວຜູ້ທີ່ມີຄຸນສົມບັດພຽງພໍ;
- ທ່ານມີຄ່າໃຊ້ຈ່າຍທີ່ຈຳເປັນ ຫຼື ຄວາມຈຳເປັນຮີບດ່ວນເນື່ອງຈາກໄພພິບັດທີ່ບໍ່ໄດ້ຮັບການຄຸ້ມຄອງຈາກປະກັນໄພ ຫຼື ທ່ານໄດ້ຍື່ນຂໍ້ຮຽກຮ້ອງຂໍປະກັນແຕ່ຜົນປະໂຫຍດຂອງທ່ານບໍ່ພຽງພໍທີ່ຈະຄຸ້ມຄອງຄ່າໃຊ້ຈ່າຍ ຫຼືຄວາມເສຍຫາຍຂອງທ່ານບໍ່ຖືກຄຸ້ມຄອງໂດຍປະກັນໄພ ຫຼື ແຫຼ່ງອື່ນໆ.

## ໂຄງການຊ່ວຍເຫຼືອບຸກຄົນຂອງ FEMA ເພີ່ມເຕີມ

**ການໃຫ້ຄຳປຶກສາໃນພາວະວິກິດ:** ຊ່ວຍເຫຼືອບຸກຄົນ ແລະ ຊຸມຊົນຟື້ນຟູຈາກຜົນກະທົບຂອງໄພພິບັດໂດຍຜ່ານການບໍລິການເຂົ້າເຖິງຊຸມຊົນ ແລະ ການບໍລິການທາງດ້ານການສຶກສາ.

**ການຫວ່າງງານຈາກໄພພິບັດ:** ໃຫ້ເງິນຊ່ວຍເຫຼືອຫວ່າງການ ແລະ ການບໍລິການຊ່ວຍຊອກວຽກເຮັດຄືນໃຫ້ແກ່ຜູ້ລອດຊີວິດທີ່ໄດ້ຮັບຜົນກະທົບຈາກໄພພິບັດຂະໜາດໃຫຍ່ປະກາດໂດຍປະທານາທິບໍດີ. ການບໍລິການເຫຼົ່ານີ້ຢູ່ພາຍໃຕ້ຄວາມຮັບຜິດຊອບຂອງກະຊວງແຮງງານຂອງສະຫະລັດ ແລະ ບໍລິຫານໂດຍເຈົ້າໜ້າທີ່ຄຸ້ມຄອງເຫດສຸກເສີນຂອງລັດຖະບານຂັ້ນຂອງລັດ, ທ້ອງຖິ່ນ, ອານາເຂດ ຫຼື ຊົນເຜົ່າໃນເຂດທີ່ຖືກກະທົບ.

**ການບໍລິການດ້ານກົດໝາຍໄພພິບັດ:** ໃຫ້ການຊ່ວຍເຫຼືອດ້ານກົດໝາຍໂດຍບໍ່ເສຍຄ່າໃຫ້ແກ່ບຸກຄົນທີ່ມີລາຍໄດ້ໜ້ອຍຜູ້ທີ່ບໍ່ສາມາດຊອກການບໍລິການດ້ານກົດໝາຍ ເພື່ອຈັດການກັບຄວາມຕ້ອງການທີ່ກ່ຽວຂ້ອງກັບໄພພິບັດ.

**ການຄຸ້ມຄອງໄພພິບັດ:** ໃຫ້ການຊ່ວຍເຫຼືອແກ່ບຸກຄົນຜູ້ທີ່ບໍ່ສາມາດຕອບສະໜອງຄວາມຕ້ອງການອັນຈຳເປັນຍ້ອນໄພພິບັດໄດ້ຜ່ານການພັດທະນາ ແລະ ຈັດຕັ້ງປະຕິບັດແຜນການຟື້ນຟູຄົວເຮືອນ.

## ການຊ່ວຍເຫຼືອຈາກອົງການຄູ່ຮ່ວມ

ເພື່ອເຮັດໃຫ້ໄດ້ຕາມຄວາມຈຳເປັນຂອງຜູ້ລອດຊີວິດຈາກໄພພິບັດ, ຄູ່ຮ່ວມຂອງ FEMA ກັບອົງການທີ່ສັງກັດ ແລະ ບໍ່ສັງກັດລັດຖະບານອື່ນ.

FEMA ເຮັດວຽກຮ່ວມກັບອົງການບໍລິຫານທຸລະກິດຂະໜາດນ້ອຍຂອງສະຫະລັດເພື່ອຈັດຫາເງິນກູ້ໄພພິບັດດອກເບ້ຍຕ່ຳໃຫ້ແກ່ຜູ້ທີ່ເປັນເຈົ້າຂອງບ້ານ ແລະ ຜູ້ເຊົ່າບ້ານໃນເຂດທີ່ປະກາດໄພພິບັດ. ທ່ານບໍ່ຈຳເປັນຕ້ອງເປັນເຈົ້າຂອງທຸລະກິດເພື່ອຈະຍື່ນຂໍເງິນກູ້ໄພພິບັດ.

ຮຽນຮູ້ເພີ່ມເຕີມກ່ຽວກັບການຍື່ນຂໍເງິນກູ້ໄພພິບັດ ຫຼື ກ່ຽວກັບການຊ່ວຍເຫຼືອທີ່ມີຢູ່ຈາກຄູ່ຮ່ວມ FEMA ອື່ນໆໄດ້ທີ່: www.DisasterAssistance.gov

FEMA B-545/ເມສາ 2019

FEMA